ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0012/ກປ

ນະຄອນຫຼວງວຽງຈັນ, ວັນທີ 07 JAN 2011

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

- ອີງຕາມຄຳສັ່ງແນະນຳຂອງກົມການເມືອງສູນກາງພັກ ສະບັບເລກທີ 09/ກມສພ, ລົງວັນທີ 08 ມິຖຸນາ 2004 ວ່າດ້ວຍການສ້າງບ້ານ ແລະ ກຸ່ມບ້ານພັດທະນາ;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມຄຳສັ່ງເພີ່ມເຕີມຂອງນາຍົກລັດຖະມົນຕີ ສະບັບເລກທີ 13/ນຍ, ລົງວັນທີ 09 ມິຖຸນາ 2008 ກ່ຽວກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາ.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ ດັ່ງນີ້:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກຳນົດຫຼັກການ, ລະບຽບການ, ຂັ້ນຕອນ, ການຊີ້ນຳພາ ແລະ ວິທີການຈັດຕັ້ງປະຕິບັດວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແນໃສ່ນຳເອົາເຕັກນິກ, ເຕັກໂນໂລຢີດ້ານການຜະລິດກະສິກຳ ແລະ ປ່າໄມ້ ລົງໄປນຳພາຮາກຖານບ້ານ ກໍຄືປະຊາຊົນບັນດາເຜົ່າ ຈັດຕັ້ງປະຕິບັດຢູ່ຂັ້ນຄອບຄົວ, ສ້າງໃຫ້ມີຕົວແບບການຜະລິດໃດໜຶ່ງຂຶ້ນ, ຖືເອົາຄອບຄົວຕົວແບບເປັນບ່ອນຮຽນຮູ້, ເປັນບ່ອນເຜີຍແຜ່ບົດຮຽນດັ່ງກ່າວອອກສູ່ສັງຄົມຢ່າງກວ້າງຂວາງ, ສ້າງໃຫ້ບ້ານກາຍເປັນບ່ອນຜະລິດ ແລະ ຈຳໜ່າຍສິນຄ້າກະສິກຳຕາມທ່າແຮງ ຂອງຕົນ, ເຮັດໃຫ້ເສດຖະກິດຂອງຄອບຄົວ, ຂອງບ້ານໄດ້ຮັບການພັດທະນາຕາມທິດເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

**ມາດຕາ 2. ຄວາມສຳຄັນຂອງການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້**

ການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ມີຄວາມສຳຄັນດັ່ງນີ້:

1. ເປັນການປະກອບສ່ວນທີ່ສຳຄັນ ເຂົ້າໃນການຈັດຕັ້ງປະຕິບັດ 4 ເນື້ອໃນ 4 ຄາດໝາຍທີ່ລະບຸໄວ້ໃນຄຳສັ່ງແນະນຳ ເລກທີ 09/ກມສພ, ລົງວັນທີ 08 ມິຖຸນາ 2004;
2. ເປັນການຊຸກຍູ້ສົ່ງເສີມບຸກຄົນ ແລະ ຄອບຄົວທີ່ມີຜົນງານດີເດັ່ນ ແນໃສ່ໂຄສະນາເຜີຍແຜ່ວຽກດີຄົນເດັ່ນ, ບົດຮຽນ ແລະ ເຕັກນິກການຜະລິດກະສິກຳ ແລະ ປ່າໄມ້ ໃຫ້ອອກສູ່ສັງຄົມຢ່າງກວ້າງຂວາງກວ່າເກົ່າ; ຍູ້ຂະບວນການສ້າງຄອບຄົວ ແລະ ບ້ານແບບຢ່າງຕິດພັນກັບຂະບວນການແຂ່ງຂັນ ພາຍໃຕ້ຫົວຂໍ້ "ຮັກຊາດ ແລະ ພັດທະນາ" ຕາມທີ່ດຳລັດຂອງນາຍົກລັດຖະມົນຕີ ເລກທີ 121/ນຍ, ລົງວັນທີ 24 ກຸມພາ 2010;
3. ເປັນການປະກອບສ່ວນທີ່ສຳຄັນເຂົ້າໃນການລຶບລ້າງຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າເວົ້າລວມ, ເວົ້າສະເພາະແມ່ນເພື່ອຍົກສູງລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງຊາວກະສິກອນໃຫ້ນັບມື້ສູງຂຶ້ນ. ຊຶ່ງໃນນີ້ຖືເອົາວຽກງານການຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ເປັນວຽກງານສຳຄັນໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ;
4. ເປັນການຈັດຕັ້ງປະຕິບັດແຜນການພັດທະນາກະສິກຳ ແລະ ປ່າໄມ້ ທີ່ກະຊວງກະສິກຳ ແລະ ປ່າໄມ້ ວາງອອກໃນແຕ່ລະໄລຍະ.

## ມາດຕາ 3. ອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ຕົວແບບດ້ານການຜະລິດກະສິກຳ** ໝາຍເຖິງແບບຢ່າງຂອງການດຳເນີນການຜະລິດກະສິກຳໃດໜຶ່ງ ເປັນຕົ້ນ: ການປູກຜັກປອດສານພິດ, ການເຮັດນາກ້າກົບດຽວ, ການປູກພືດເປັນສິນຄ້າ, ການລ້ຽງປາໃນນາ, ການລ້ຽງປາກະຊັງ, ການລ້ຽງໝູ ແລະ ອື່ນໆ;
2. **ຕົວແບບດ້ານການຜະລິດປ່າໄມ້** ໝາຍເຖິງແບບຢ່າງຂອງການດຳເນີນການຜະລິດປ່າໄມ້ໃດໜຶ່ງ ເປັນຕົ້ນ: ການປູກໄມ້ອຸດສະຫະກຳ, ການກ້າເບັ້ຽໄມ້ເປັນສິນຄ້າ, ການປົກປັກຮັກສາປ່າໄມ້, ການປຸງແຕ່ງໄມ້, ການທ່ອງທ່ຽວທຳມະຊາດ ແລະ ອື່ນໆ;
3. **ຄອບຄົວຕົວແບບ** ໝາຍເຖິງຄອບຄົວທີ່ປະສົບຜົນສຳເລັດໃນການຜະລິດກະສິກຳ ຫຼື ປ່າໄມ້ ໃດໜຶ່ງທີ່ ສາມາດເປັນແບບຢ່າງໃນການຜະລິດເປັນສິນຄ້າ, ດ້ານການຍົກຜະລິດຕະພາບ ພ້ອມທັງສ້າງລາຍຮັບທີ່ມີຜົນສູງທາງເສດຖະກິດ ແລະ ທັງເປັນບ່ອນຖ່າຍທອດຄວາມຮູ້ໃຫ້ແກ່ປະຊາຊົນ ແລະ ສັງຄົມ ນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍອອກສູ່ວົງກວ້າງ;
4. **ບ້ານແບບຢ່າງກະສິກຳ ແລະ ປ່າໄມ້** ໝາຍເຖິງບ້ານທີ່ມີຈຳນວນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ພາຍໃນບ້ານກວມ 60 % (ຫົກສິບສ່ວນຮ້ອຍ) ຂຶ້ນໄປ.

## ມາດຕາ 4. ຫຼັກການຂອງການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

ການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ຕ້ອງຮັບປະກັນຫຼັກການພື້ນຖານ ດັ່ງນີ້:

1. ພື້ນຖານ ຕ້ອງເກີດຈາກຄວາມສະມັກໃຈ, ລິເລີ່ມດ້ວຍຕົນເອງ, ມີຄວາມກະຕືລືລົ້ນຢາກ

ພັດທະນາຕົນເອງ ແລະ ຄອບຄົວ ໂດຍສອດຄ່ອງກັບນະໂຍບາຍ ແລະ ກົດໝາຍຂອງລັດວາງອອກ;

2. ຕ້ອງຮັບປະກັນການອະນຸລັກ ແລະ ປົກປັກຮັກສາທຳມະຊາດ, ສິ່ງແວດລ້ອມ ແລະ ຊັບພະຍາກອນປ່າໄມ້;
3. ຕ້ອງຕິດພັນກັບການສ້າງຕົວແບບການຜະລິດກະສິກຳ ແລະ ປ່າໄມ້ດ້ານໃດໜຶ່ງ;
4. ຕ້ອງຕິດພັນກັບການຕະຫຼາດ, ການສ້າງມູນຄ່າເພີ່ມ, ການປະຢັດຕົ້ນທຶນ ແລະ ການປະຢັດແຮງງານ;
5. ຕ້ອງຮັບປະກັນຄວາມຍືນຍົງຄົງຕົວ ພ້ອມທັງມີທັດສະນະສືບທອດ.

**ມາດຕາ 5. ມາດຖານ ແລະ ເງື່ອນໄຂ ຂອງຄອບຄົວຕົວແບບກະສິກຳ ແລະ ປ່າໄມ້**

ຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ ແມ່ນຄອບຄົວທີ່ດຳເນີນການຜະລິດກະສິກຳ ແລະ ປ່າໄມ້ຖືກຕ້ອງຕາມມາດຖານ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ຄື:

**ກ. ດ້ານມາດຖານ:**

1. ເປັນຄອບຄົວທີ່ທຳການຜະລິດກະສິກຳ ຫຼື ປ່າໄມ້ໃດໜຶ່ງໂດຍລາຍໄດ້ຈາກຜົນຜະລິດຄິດໄລ່ເປັນມູນຄ່າເຂົ້າກຸ້ມກິນຕະຫຼອດປີ, ມີສ່ວນແຮໄວ້ ແລະ ຂາຍອອກເປັນສິນຄ້າໄດ້ ໂດຍສະເລ່ຍລາຍຮັບຕໍ່ຫົວຄົນໃນຄອບຄົວ ບໍ່ໃຫ້ຫຼຸດມາດຖານທີ່ລັດຖະບານ ຫຼື ທ້ອງຖິ່ນກຳນົດໄວ້;
2. ເປັນຄອບຄົວທີ່ມີເນື້ອທີ່ທຳການຜະລິດກະສິກຳ ຫຼື ປ່າໄມ້ ດ້ານໃດໜຶ່ງເປັນຂອງຕົນເອງ;
3. ເປັນຄອບຄົວທີ່ມີແຮງງານຄົນ ຫຼື ແຮງງານລາກແກ່ ເພື່ອທຳການຜະລິດກະສິກຳ ຫຼື ປ່າໄມ້ ໃນເນື້ອທີ່ຂອງຕົນເອງຢ່າງພຽງພໍ;
4. ເປັນຄອບຄົວທີ່ໄດ້ຮັບຄວາມເຊື່ອຖື, ຖືກຍອມຮັບຈາກອຳນາດການປົກຄອງທ້ອງຖິ່ນ, ປະຊາຊົນອ້ອມຂ້າງ ແລະ ທັງສາມາດຖ່າຍທອດຜັນຂະຫຍາຍອະທິບາຍບົດຮຽນ ຂອງຕົນເອງອອກສູ່ສັງຄົມໄດ້;
5. ເປັນຄອບຄົວທີ່ບໍ່ໄດ້ຖາງປ່າເຮັດໄຮ່ແບບເລື່ອນລອຍ.

**ຂ. ດ້ານເງື່ອນໄຂ:**

ຄອບຄົວທີ່ຈະສາມາດຮັບຮອງເປັນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ໄດ້ ນອກຈາກປະຕິບັດຕາມມາດຖານຂ້າງເທິງນີ້ແລ້ວ, ຍັງຕ້ອງປະຕິບັດຢ່າງໜ້ອຍໜຶ່ງໃນເງື່ອນໄຂຂ້າງລຸ່ມນີ້:

1. ເປັນຄອບຄົວທີ່ນຳໃຊ້ແນວພັນປັບປຸງ, ຝຸ່ນຄອກ, ຝຸ່ນໝັກ, ຝຸ່ນບົ່ມ ຫຼື ຝຸ່ນຊີວະພາບ ແລະ ທັງປະຕິບັດຕາມກຳນົດໝາຍເຕັກນິກ ທີ່ວິຊາການແນະນຳ;
2. ເປັນຄອບຄົວທີ່ມີສັດລ້ຽງໄດ້ຮັບການສັກຢາກັນພະຍາດ 60% ຂຶ້ນໄປ.

**ມາດຕາ 6. ມາດຖານ ແລະ ເງື່ອນໄຂຂອງບ້ານແບບຢ່າງກະສິກຳ ແລະ ປ່າໄມ້**

ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແມ່ນບ້ານທີ່ດຳເນີນການຜະລິດກະສິກຳ ຫຼື ປ່າໄມ້ຖືກຕ້ອງຕາມມາດຖານ ແລະ ເງື່ອນໄຂທີ່ກຳນົດໃນຂໍ້ຕົກລົງສະບັບນີ້ຄື:

ກ. ດ້ານມາດຖານ:

ຕ້ອງເປັນບ້ານທີ່ມີຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ກວມ 60% ຂຶ້ນໄປ.

ຂ. ດ້ານເງື່ອນໄຂ:

ບ້ານທີ່ຈະສາມາດປະກາດຮັບຮອງເປັນບ້ານແບບຢ່າງທາງດ້ານກະສິກຳ ແລະ ປ່າໄມ້ໄດ້ ນອກຈາກປະຕິບັດຕາມມາດຖານຂ້າງເທິງນີ້ແລ້ວ, ຍັງຕ້ອງປະຕິບັດຢ່າງໜ້ອຍໜຶ່ງໃນເງື່ອນໄຂຂ້າງລຸ່ມນີ້:

1. ເປັນບ້ານທີ່ມີການຈັດຕັ້ງກຸ່ມການຜະລິດໃດໜຶ່ງຢ່າງເປັນລະບົບເຊັ່ນ: ກຸ່ມສົ່ງເສີມການຜະລິດພືດເປັນສິນຄ້າ, ກຸ່ມລ້ຽງສັດ, ມີທະນາຄານເຂົ້າ ຫຼື ມີທະນາຄານສັດ ຫຼື ມີສະຫະກອນສິນເຊື່ອ ຫຼື ກຸ່ມທ້ອນເງິນ ແລະ ອື່ນໆ;
2. ເປັນບ້ານທີ່ມີວິຊາການກະສິກຳ ແລະ ປ່າໄມ້ດ້ານໃດໜຶ່ງທີ່ແນ່ນອນ ເພື່ອຮັບປະກັນການພັດທະນາກະສິກຳ ຫຼື ປ່າໄມ້ຂອງບ້ານ;
3. ເປັນບ້ານທີ່ໄດ້ສຳເລັດວຽກງານການວາງແຜນນຳໃຊ້ທີ່ດິນ, ມອບດິນ - ມອບປ່າມາແລ້ວ;
4. ເປັນບ້ານທີ່ມີຜະລິດຕະພັນກະສິກຳ ແລະ ປ່າໄມ້ຊະນິດໃດໜຶ່ງເປັນສິນຄ້າ;
5. ເປັນບ້ານທີ່ມີອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ແລະ ປ່າໄມ້ຂະໜາດນ້ອຍຊະນິດໃດໜຶ່ງ;
6. ເປັນບ້ານທີ່ມີຕະຫຼາດກະສິກຳສະອາດຢ່າງໜ້ອຍໜຶ່ງແຫ່ງ;
7. ເປັນບ້ານທີ່ມີສູນ ຫຼື ມີຈຸດບໍລິການເຕັກນິກກະສິກຳ ແລະ ປ່າໄມ້ຢ່າງໜ້ອຍໜຶ່ງສູນ.

## ໝວດ II
## ຂັ້ນຕອນ ແລະ ວິທີການສ້າງ
## ຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

**ມາດຕາ 7. ຂັ້ນຕອນຂອງການສ້າງຄອບຄົວຕົວແບບກະສິກຳ ແລະ ປ່າໄມ້**

ການສ້າງຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

**1. ການກະກຽມ**

- ພະນັກງານຮັບຜິດຊອບຂັ້ນແຂວງ ແລະ ເມືອງ ໂດຍມີການປະສານສົມທົບເອກະພາບກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ;
- ເອກະສານດ້ານນິຕິກຳ ແລະ ເອກະສານວິຊາສະເພາະຕ່າງໆ;
- ງົບປະມານ ແລະ ປັດໃຈອື່ນໆ ທີ່ມີຄວາມຈຳເປັນ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

**2. ການເກັບກຳຂໍ້ມູນ**

- ຈັດຕັ້ງການເຜີຍແຜ່, ໂຄສະນາສ້າງຄວາມເຂົ້າໃຈຕໍ່ຈຸດປະສົງ ແລະ ເນື້ອໃນຂອງຂໍ້ຕົກລົງສະບັບນີ້;

- ດຳເນີນການເກັບກຳຂໍ້ມູນຮອບດ້ານຂອງສະມາຊິກພາຍໃນຄອບຄົວ ແລະ ບ້ານເປົ້າໝາຍ ເຊັ່ນ: ການຜະລິດ, ຊີວິດການເປັນຢູ່, ວິຊາຊີບ, ຮີດຄອງປະເພນີ, ການເຊື່ອຖື ແລະ ອື່ນໆ ໂດຍມີການປະສານສົມທົບແໜ້ນກັບຄະນະພັກ ແລະ ອຳນາດການປົກຄອງບ້ານ;
- ຄົ້ນຄວ້າ, ວິເຄາະ ແລະ ວິໄຈຂໍ້ມູນ ແລະ ກຳນົດສ້າງເປັນແຜນການຊຸກຍູ້ໃນຂັ້ນຕໍ່ໄປ;
- ກຳນົດແຈ້ງເຂົ້າໃນແຜນການ ເຖິງຈຳນວນຄອບຄົວ ແລະ ບ້ານເປົ້າໝາຍທີ່ຈະສ້າງໃຫ້ເປັນຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ຕາມມາດຖານທີ່ກຳນົດ.

**3. ການຈັດຕັ້ງປະຕິບັດ**

- ຄະນະຮັບຜິດຊອບວຽກງານສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແຕ່ລະຂັ້ນ ສ້າງແຜນການ, ແຜນງານ, ໂຄງການ ແລະ ແຜນງົບປະມານກ່ຽວກັບວຽກງານດັ່ງກ່າວໃນທົ່ວແຂວງ, ນະຄອນຫຼວງຂອງຕົນ ໂດຍມີການປະສານສົມທົບກັບອຳນາດການປົກຄອງທີ່ກ່ຽວຂ້ອງທຸກຂັ້ນ;
- ດຳເນີນການເຜີຍແຜ່, ໂຄສະນານິຕິກຳທີ່ກ່ຽວຂ້ອງ ແລະ ບັນດາເອກະສານເຕັກນິກວິຊາການຕ່າງໆໃຫ້ແກ່ຫົວໜ່ວຍຄອບຄົວ, ບ້ານ ແລະ ກຸ່ມບ້ານ ໂດຍນຳໃຊ້ທຸກໆເຄື່ອງມືສື່ຕ່າງໆເປັນຕົ້ນປື້ມຄູ່ມື, ແຜ່ນພັບ, ໂປສເຕີ ແລະ ອື່ນໆ;
- ລົງສົມທົບກັບຄະນະພັກ ແລະ ອຳນາດການປົກຄອງບ້ານ ວາງເປົ້າໝາຍໃນການລົງຊຸກຍູ້, ຊ່ວຍເຫຼືອດ້ານເຕັກນິກ ການຜະລິດກະສິກຳ ແລະ ປ່າໄມ້ໃຫ້ແກ່ຫົວໜ່ວຍຄອບຄົວ;
- ຄະນະພັກ ແລະ ອຳນາດການປົກຄອງບ້ານ, ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານເຮັດໜ້າທີ່ຕິດຕາມ, ກວດກາ, ແນະນຳຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງຂອງບັນດາຄອບຄົວເປົ້າໝາຍເປັນແຕ່ລະໄລຍະ ຫຼື ແຕ່ລະເດືອນ ຖ້າອັນໃດບໍ່ທັນໄດ້ມາດຖານກໍ່ໃຫ້ແນະນຳ ຫຼື ຊຸກຍູ້ການຜະລິດໃຫ້ໄປຕາມມາດຖານທີ່ໄດ້ກຳນົດໄວ້;
- ສະມາຊິກຄອບຄົວ ຕ້ອງມີຄວາມກະຕືລືລົ້ນເຮັດການຜະລິດກະສິກຳດ້ານໃດດ້ານໜຶ່ງຕາມເງື່ອນໄຂ ແລະ ທ່າແຮງ ເພື່ອສ້າງຄອບຄົວຂອງຕົນໃຫ້ກາຍເປັນຄອບຄົວຕົວແບບ.

**4. ການປະເມີນຜົນ**

- ຄະນະຮັບຜິດຊອບວຽກງານສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແຕ່ລະຂັ້ນ ສະຫຼຸບຕີລາຄາ, ປະເມີນຜົນການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃນທົ່ວເຂດຄວາມຮັບຜິດຊອບຂອງຕົນໃນແຕ່ລະປີ;
- ພາຍຫຼັງສະຫຼຸບຕີລາຄາປະເມີນຜົນ, ຫາກເຫັນວ່າຄອບຄົວໃດໄດ້ຕາມມາດຕະຖານຄົບຖ້ວນແລ້ວ, ກໍແມ່ນສາມາດອອກໃບຢັ້ງຢືນເປັນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ໃຫ້ໄດ້ເລີຍ;
- ສ່ວນບ້ານໃດມີເງື່ອນໄຂ ເປັນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ໄດ້ກໍແມ່ນໃຫ້ຮີບຮ້ອນດຳເນີນການຮັບຮອງ ແລະ ປະກາດຢ່າງເປັນທາງການໂດຍໄວ ຕາມເງື່ອນໄຂຕົວຈິງຂອງແຕ່ລະທ້ອງຖິ່ນ;
- ສຳລັບຄອບຄົວທີ່ມີເງື່ອນໄຂ ແຕ່ຍັງຂາດບາງມາດຖານໃດໜຶ່ງນັ້ນ, ຄະນະຮັບຜິດຊອບ

ຕ້ອງສືບຕໍ່ຊຸກຍູ້ ໃຫ້ຄອບຄົວດັ່ງກ່າວດຳເນີນການຜະລິດຂອງຕົນໃຫ້ໄດ້ຄົບຖ້ວນຕາມມາດຖານ;

- ສຳລັບຄອບຄົວທີ່ບໍ່ມີເງື່ອນໄຂນັ້ນ, ຄະນະຮັບຜິດຊອບ ຕ້ອງໄດ້ຄົ້ນຄ້ວາຊອກຫາເງື່ອນໄຂ ແລະ ປັດໄຈອື່ນໆທີ່ເໝາະສົມ ເພື່ອຊ່ວຍຜູ້ກ່ຽວໃຫ້ສາມາດປັບຕົວເປັນຄອບຄົວຕົວແບບໃນຕໍ່ໜ້າໄດ້.

5. **ການຮັບຮອງຄອບຄົວຕົວແບບກະສິກຳ ແລະ ປ່າໄມ້**

**ຄອບຄົວຕົວແບບກະສິກຳ ແລະ ປ່າໄມ້** ແມ່ນເຈົ້າເມືອງເປັນຜູ້ເຊັນຮັບຮອງຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ໂດຍເປັນເອກະພາບກັບຄະນະພັກ ອຳນາດການປົກຄອງບ້ານ ແລະ ໜ່ວຍງານກໍ່ສ້າງຮາກຖານການເມືອງ;

**ມາດຕາ 8. ຂັ້ນຕອນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້**

ການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ຕ້ອງດຳເນີນໄປຕາມຂັ້ນຕອນ ດັ່ງນີ້:

1. **ການກະກຽມ**

- ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ຕ້ອງຄົ້ນຄວ້າກຳແໜ້ນຈຸດປະສົງລະດັບຄາດໝາຍ, ເນື້ອໃນ, ມາດຖານ ແລະ ວິທີການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ແລ້ວ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນຂອງຕົນ ສ້າງເປັນແຜນການກ່ຽວກັບການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ພາຍໃນແຂວງ, ນະຄອນຫຼວງ, ເມືອງ ຂອງຕົນແລ້ວ ນຳສະເໜີຕໍ່ຄະນະພັກ ແລະ ອຳນາດການປົກຄອງຂັ້ນຂອງຕົນ ເພື່ອອະນຸມັດ;
- ເນື້ອໃນແຜນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ນັ້ນ ຈະຕ້ອງກຳນົດແຈ້ງຈຳນວນບ້ານເປົ້າໝາຍທີ່ຈະສ້າງ, ຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ, ເວລາຈັດຕັ້ງປະຕິບັດ ໂດຍອີງໃສ່ສະພາບ ແລະ ເງື່ອນໄຂຕົວຈິງຂອງແຂວງ, ນະຄອນຫຼວງຕົນ. ໃນນີ້ໃຫ້ເລືອກເອົາບ້ານທີ່ເປັນຈຸດສຸມພັດທະນາຂອງແຂວງ, ນະຄອນຫຼວງຕົນ ຫຼື ບ້ານທີ່ເຫັນວ່າຄວນເອົາເປັນບ້ານແບບຢ່າງໃນການພັດທະນາກະສິກຳ ແລະ ປ່າໄມ້;
- ຄົ້ນຄວ້າ, ກຳແໜ້ນສະພາບການຮອບດ້ານຂອງບ້ານເປົ້າໝາຍທີ່ຈະສ້າງ ເຊັ່ນ: ສະພາບການຜະລິດ, ວິຊາຊີບ, ຊີວິດການເປັນຢູ່, ຈິດຕະສາດ, ຮີດຄອງປະເພນີ, ການເຊື່ອຖື, ປະກົດການຫຍໍ້ທໍ້ ແລະ ອື່ນໆທີ່ເຫັນວ່າຈຳເປັນ;
- ຕ້ອງມີການກະກຽມບັນດາເອກະສານດ້ານນິຕິກຳ, ເອກະສານວິຊາສະເພາະ, ການໃຊ້ຈ່າຍຕ່າງໆທີ່ຈຳເປັນ, ບຸກຄະລາກອນ ຕະຫຼອດຮອດປັດໄຈຕ່າງໆ ແລະ ມີການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃຫ້ດີ.

2. **ຈັດຕັ້ງເຜີຍແຜ່ເອກະສານ ແລະ ຝຶກອົບຮົມໃຫ້ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ**

- ຈັດຕັ້ງເຜີຍແຜ່ເອກະສານນິຕິກຳທີ່ກ່ຽວກັບການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ເປັນຕົ້ນແມ່ນເນື້ອໃນ, ມາດຖານ, ແຜນການ ແລະ ວິທີການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ຕາມທີ່ກຳນົດໃນຂອງຂໍ້ຕົກລົງສະບັບນີ້ ໂດຍເປົ້າໝາຍຜູ້ເຂົ້າຮ່ວມໄດ້ແກ່: ພະນັກງານກໍ່ສ້າງຮາກຖານການເມືອງ, ອົງການປົກຄອງ, ອົງການຈັດຕັ້ງມະຫາຊົນ, ທົວ

ໜ້າໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ, ຫົວໜ້າໜ່ວຍ, ຫົວໜ້າຄອບຄົວ ແລະ ສະມາຊິກເຂົ້າຮ່ວມ ເພື່ອແນໃສ່ເຮັດໃຫ້ເຂົາເຈົ້າເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້;

- ສ້າງຂໍ້ຜູກພັນລະຫວ່າງແຕ່ລະຄອບຄົວກັບອົງການປົກຄອງບ້ານ ເພື່ອພ້ອມກັນສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ໃຫ້ໄດ້ຕາມມາດຖານທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
- ຈັດຕັ້ງການຝຶກອົບຮົມໃຫ້ຄະນະໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ເພື່ອໃຫ້ເຂົາເຈົ້າເຂົ້າໃຈ, ກຳແໜ້ນແຜນການ, ເນື້ອໃນ, ມາດຖານ ແລະ ຂັ້ນຕອນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້.

**3. ການຜັນຂະຫຍາຍ, ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ**

- ຕິດຕາມກວດກາ, ແນະນຳຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງຂອງບັນດາບ້ານຈຸດສຸມ ຫຼື ບ້ານເປົ້າໝາຍທີ່ຈະສ້າງເປັນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ຢ່າງເປັນປະຈຳແຕ່ລະເດືອນ, ສາມເດືອນ, ຫົກເດືອນ ແລະ ເປັນປີ ຖ້າເຫັນວ່າອັນໃດບໍ່ທັນໄດ້ມາດຖານກໍໃຫ້ແນະນຳເຂົາເຈົ້າ;
- ຈັດຕັ້ງການໂຄສະນາເຜີຍແຜ່ນິຕິກຳຕ່າງໆກ່ຽວກັບວຽກງານກະສິກຳ ແລະ ປ່າໄມ້ ເຊັ່ນ: ກົດໝາຍວ່າດ້ວຍປ່າໄມ້ ສະບັບປັບປຸງ 2007, ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ, ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍວ່າດ້ວຍການປະມົງ, ກົດໝາຍວ່າດ້ວຍກະສິກຳ, ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ທັງນີ້ກໍເພື່ອໃຫ້ປະຊາຊົນພາຍໃນບ້ານເປົ້າໝາຍໄດ້ຮັບຮູ້ເຂົ້າໃຈຕໍ່ນິຕິກຳດັ່ງກ່າວຢ່າງເລິກເຊິ່ງ.

**4. ການສະຫຼຸບ, ຕີລາຄາ ແລະ ປະເມີນຜົນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້**

- ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຕ້ອງປະສານສົມທົບກັບຫ້ອງການກໍ່ສ້າງຮາກຖານການເມືອງ ອອກຄຳແນະນຳໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ໜ່ວຍງານກໍ່ສ້າງຮາກຖານການເມືອງ ສົມທົບກັນກະກຽມສະຫຼຸບຕີລາຄາ ແລະ ປະເມີນຜົນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃນຂອບເຂດເມືອງຂອງຕົນ;
- ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ໜ່ວຍກໍ່ສ້າງຮາກຖານການເມືອງສົມທົບກັນກະກຽມເອກະສານນິຕິກຳຕ່າງໆ ກ່ຽວກັບການຈັດຕັ້ງດຳເນີນການປະເມີນຜົນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ເພື່ອນຳສະເໜີເຈົ້າເມືອງເຊັນ ຫຼື ອະນຸມັດໃຫ້ຈັດຕັ້ງປະຕິບັດ ແລ້ວແນະນຳໃຫ້ແຕ່ລະກຸ່ມບ້ານ ແລະ ບ້ານເປັນຜູ້ສະຫຼຸບຕີລາຄາປະເມີນຜົນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ໃນແຕ່ລະບ້ານ, ກຸ່ມບ້ານໃນທົ່ວເມືອງຂອງຕົນ;
- ຄະນະພັກຮາກຖານກຸ່ມບ້ານ ຊີ້ນຳ - ນຳພາໃຫ້ອົງການປົກຄອງບ້ານ ເປັນເຈົ້າການສະຫຼຸບຕີລາຄາປະເມີນຜົນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ໃນແຕ່ລະປີ, ຖ້າ

ຈຳເປັນອາດຈະແຕ່ງຕັ້ງຄະນະຮັບຜິດຊອບສະເພາະເພື່ອດຳເນີນການ. ອັນສຳຄັນໃນການສະຫຼຸບຕີລາຄາປະເມີນຜົນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ອີງໃສ່ບັນດາເນື້ອໃນ, ມາດຖານ, ຂັ້ນຕອນ ແລະ ວິທີການທີ່ກຳນົດໃນຂໍ້ຕົກລົງສະບັບນີ້, ພ້ອມກັນນັ້ນກໍໃຫ້ອີງໃສ່ໝາກຜົນ ແລະ ຈຸດພິເສດຕົວຈິງໃນການຈັດຕັ້ງປະຕິບັດຢູ່ໃນແຕ່ລະກຸ່ມບ້ານ ແລະ ບ້ານ;

- ໃນແຕ່ລະປີ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ, ເມືອງ ແລະ ກຸ່ມ ບ້ານ ຕ້ອງສະຫຼຸບຕີລາຄາ, ຖອດຖອນບົດຮຽນແລ້ວ ກຳນົດທິດທາງແຜນການ ແລະ ວິທີການກ່ຽວກັບການສືບຕໍ່ສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ໃນຂັ້ນຂອງຕົນໃຫ້ທັນເວລາ ແລະ ຕໍ່ເນື່ອງ;

5. **ການຮັບຮອງ ແລະ ປະກາດບ້ານແບບຢ່າງກະສິກຳ ແລະ ປ່າໄມ້**

- ພາຍຫຼັງທີ່ໄດ້ຮັບລາຍງານຈາກບ້ານ, ກຸ່ມບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລ້ວ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຕ້ອງສົມທົບກັບຫ້ອງການກໍ່ສ້າງຮາກຖານການເມືອງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອກວດກາ, ຕີລາຄາຜົນຂອງການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແລ້ວນຳສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອອອກຂໍ້ຕົກລົງ ແລະ ໃບຢັ້ງຢືນຮັບຮອງເອົາບ້ານແບບຢ່າງກະສິກຳ ແລະ ປ່າໄມ້;
- ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຊີ້ນຳໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ສົມທົບກັບອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອ ກະກຽມເນື້ອໃນ ແລະ ວຽກງານຕ່າງໆໃນການຈັດພິທີປະກາດເປັນບ້ານແບບຢ່າງກະສິກຳ ແລະ ປ່າໄມ້. ສຳລັບພິທີການນັ້ນໃຫ້ອີງໃສ່ເງື່ອນໄຂ ແລະ ສະພາບຕົວຈິງຂອງແຕ່ລະບ້ານ ເພື່ອຈັດຕັ້ງໃຫ້ເໝາະສົມ, ປະຢັດ, ກະທັດຮັດ, ອາດຈະຈັດຕັ້ງພິທີຕ່າງຫາກ ຫຼື ເຮັດຮ່ວມກັບພິທີປະກາດນາມມະຍົດອື່ນໆກໍໄດ້;
- ສຳລັບເນື້ອໃນພິທີປະກາດບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ມີບົດສະຫຼຸບຜົນການສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແລະ ຜ່ານທິດທາງແຜນການສືບຕໍ່ປົກປັກຮັກສາ ແລະ ສ້າງບ້ານແບບຢ່າງກະສິກຳ ແລະ ປ່າໄມ້, ອ່ານຂໍ້ຕົກລົງຮັບຮອງ, ມອບໃບຢັ້ງຢືນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແລ້ວເປີດປ້າຍບ້ານແບບຢ່າງກະສິກຳ ແລະ ປ່າໄມ້. ສຳລັບຄຳຂວັນຕິດພິທີປະກາດບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ປະຕິບັດເປັນເອກະພາບກັນ ດັ່ງນີ້:
  - ◆ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
  - ◆ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
  - ◆ ຮູບຜູ້ນຳພັກ - ລັດ
  - ◆ ຊົມເຊີຍບ້ານ......................ເປັນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ຢ່າງສຸດໃຈ !
  - ◆ ຕັ້ງໜ້າຜະລິດກະສິກຳເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ !
  - ◆ ພ້ອມກັນປົກປັກຮັກສາບ້ານ.........................ໃຫ້ເປັນບ້ານແບບຢ່າງກະສິກຳ ແລະ

ປ່າໄມ້ ຕະຫຼອດໄປ !

- ສຳລັບໃບຢັ້ງຢືນຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດທາງດ້ານເນື້ອໃນ, ຂະໜາດ, ຮູບແບບ ແລະ ຈັດພິມໃຫ້;
- ສຳລັບປ້າຍບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແມ່ນມອບໃຫ້ອົງການປົກຄອງບ້ານ ເປັນຜູ້ຮັບຜິດຊອບ. ຂະໜາດປ້າຍໃຫ້ປະຕິບັດເປັນເອກະພາບກັນດັ່ງນີ້: ກວ້າງ 0,50 ແມັດ, ຍາວ 1 ແມັດ, ພື້ນສີຂຽວ, ໜັງສືສີຂາວ, ຖ້າຈະຂຽນເປັນພາສາສາກົນໃສ່ຕ້ອງ ຂຽນຕົວໜັງສືນ້ອຍກ່ວາ ແລະ ຢູ່ລຸ່ມພາສາລາວ;
- ສຳລັບລາຍການດຳເນີນພິທີປະກາດ ແລະ ມອບໃບຢັ້ງຢືນຄອບຄົວຕົວແບບ ແລະ ບ້ານ ແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ປະຕິບັດ ດັ່ງນີ້:
  - ຄະນະຈັດຕັ້ງ ສະເໜີຈຸດປະສົງ ແລະ ສະເໜີແຂກເຂົ້າຮ່ວມ;
  - ຄະນະຈັດຕັ້ງ ອ່ານຂໍ້ຕົກລົງຂອງທ່ານເຈົ້າແຂວງ / ເຈົ້າຄອງນະຄອນ..................... ວ່າດ້ວຍການປະກາດບ້ານ.................. ເປັນບ້ານແບບຢ່າງກະສິກຳ ແລະ ປ່າໄມ້;
  - ຄະນະຈັດຕັ້ງ ສະເໜີຂັ້ນເທິງກ່າວເປີດພິທີ;
  - ຄະນະຈັດຕັ້ງ ສະເໜີຕາງໜ້າຄະນະກຳມະການລົງເກັບກຳຂໍ້ມູນ ແລະກວດກາພື້ນທີ່ ຕົວຈິງຂຶ້ນອ່ານບົດລາຍງານ;
  - ຄະນະຈັດຕັ້ງອ່ານຂໍ້ຕົກລົງວ່າດ້ວຍການມອບໃບຢັ້ງຢືນບ້ານແບບຢ່າງກະສິກຳ ແລະ ປ່າ ໄມ້ ໃຫ້ບ້ານ......................;
  - ຄະນະຈັດຕັ້ງອ່ານຂໍ້ຕົກລົງວ່າດ້ວຍການມອບຫຼຽນກາ, ໃບຍ້ອງຍໍ (ຕາມເງື່ອນໄຂຕົວ ຈິງ);
  - ມອບໃບຢັ້ງຢືນຄອບຄົວຕົວແບບ, ບ້ານແບບຢ່າງກະສິກຳ ແລະ ປ່າໄມ້;
  - ມອບໃບຍ້ອງຍໍ (ຕາມເງື່ອນໄຂຕົວຈິງ, ຖ້າມີ);
  - ຄະນະຈັດຕັ້ງ ສະເໜີຂັ້ນເທິງໂອ້ລົມ;
  - ຕາງໜ້າຄະນະພັກ, ອຳນາດການປົກຄອງບ້ານຂຶ້ນຮັບຄຳໂອວາດ ແລະ ຂອບໃຈ;
  - ເປີດປ້າຍ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້;
  - ຂັ້ນເທິງ ລັ່ນຄ້ອງ 9 ບາດ;
  - ຄະນະຈັດຕັ້ງ ກ່າວຂອບໃຈແຂກ ແລະ ປິດພິທີ;
  - ຄະນະຈັດຕັ້ງສະເໜີແຂກທີ່ມາຮ່ວມພິທີທ່ຽວຊົມຕະຫຼາດນັດ ຫຼື ງານວາງສະແດງສິນ ຄ້າກະສິກຳ ແລະ ປ່າໄມ້ ທີ່ຄອບຄົວຕົວແບບ, ບ້ານຜະລິດໄດ້ (ຕາມເງື່ອນໄຂຕົວ ຈິງ, ຖ້າມີ).

**ມາດຕາ 9. ວິທີການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້**

ການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ແມ່ນປະຕິບັດຕາມ ວິທີການ ດັ່ງນີ້:

1. **ກະຊວງກະສິກຳ ແລະປ່າໄມ້** ເປັນຜູ້ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການຕ່າງໆ

ກ່ຽວກັບວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແລ້ວມອບໃຫ້ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ, ພ້ອມທັງສ້າງຄູ່ມື ແລະ ຈັດຝຶກອົບຮົມກ່ຽວກັບວິທີການຈັດຕັ້ງປະຕິບັດໃຫ້ແກ່ພະນັກງານ ແລະ ປະຊາຊົນໃນຂອບເຂດທົ່ວປະເທດ;

2. **ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ** ມີໜ້າທີ່ຜັນຂະຫຍາຍເນື້ອໃນຂອງຂໍ້ຕົກລົງສະບັບນີ້ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງກັບວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ເປັນແຜນການ, ໂຄງການລະອຽດຢູ່ໃນຂັ້ນຂອງຕົນ ໂດຍມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ພ້ອມທັງສະຫຼຸບຖອດຖອນບົດຮຽນແລ້ວ ຜັນຂະຫຍາຍໄປສູ່ບ້ານອື່ນໆພາຍໃນແຂວງ, ນະຄອນຫຼວງຂອງຕົນ;
3. **ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ** ເປັນບ່ອນປະສານງານ, ມີໜ້າທີ່ຕິດຕາມ, ສັງລວມບັນຫາຕ່າງໆຊ່ວຍຄະນະພັກ ແລະ ອົງການປົກຄອງຂັ້ນຂອງຕົນກ່ຽວກັບວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ, ໃນນີ້ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເປັນຜູ້ຮັບຜິດຊອບໂດຍກົງຕໍ່ວຽກງານດັ່ງກ່າວ;
4. **ກຸ່ມບ້ານ** ມີໜ້າທີ່ໃນການຕິດຕາມກວດກາ, ຊຸກຍູ້, ຊີ້ນຳວິທີການຈັດຕັ້ງປະຕິບັດວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ;
5. **ບ້ານ** ມີໜ້າທີ່ໃນການກະຕຸກຊຸກຍູ້, ຊ່ວຍເຫຼືອບັນດາຄອບຄົວທີ່ຍັງບໍ່ທັນຄົບມາດຖານ, ພ້ອມທັງນຳສະເໜີຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເພື່ອຮັບຮອງ ແລະ ຢັ້ງຢືນເປັນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ ໂດຍມີໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານເປັນເສນາທິການ;
6. **ຫ້ອງການກະຊວງກະສິກຳ ແລະ ປ່າໄມ້** ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອນຳເອົາຂໍ້ຕົກລົງສະບັບນີ້, ລວມທັງສະພາບການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ອອກໂຄສະນາເຜີຍແຜ່ຜ່ານສື່ຕ່າງໆ ແນໃສ່ເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຮູ້, ຊາບຊຶ້ງຢ່າງທົ່ວເຖິງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
7. **ກອງສົ່ງເສີມກະສິກຳ ແລະ ປ່າໄມ້** ເປັນເຈົ້າການປະສານສົມທົບກັບກົມແຜນການ ແລະ ບັນດາກົມ, ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄ້ວາສ້າງແຜນການ, ໂຄງການ ແລະ ກິດຈະການ, ຂື້ນແຜນງົບປະມານໃຫ້ແກ່ວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃນແຕ່ລະປີ ແນໃສ່ເຮັດໃຫ້ວຽກງານນີ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ກວ້າງຂວາງ.

# ໝວດທີ III
# ການຊີ້ນຳ - ນຳພາຕໍ່ວຽກງານການສ້າງ
# ຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

## ມາດຕາ 10. ການຊີ້ນຳ - ນຳພາ

ການຊີ້ນຳ - ນຳພາຕໍ່ວຽກງານ ການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໄດ້ແບ່ງຂັ້ນການຊີ້ນຳ - ນຳພາ ດັ່ງນີ້:

1. **ຢູ່ຂັ້ນສູນກາງ** ການຄຸ້ມຄອງວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແມ່ນຂຶ້ນກັບຄວາມຮັບຜິດຊອບດ້ານວິຊາການຂອງຄະນະນຳກະຊວງກະສິກຳ ແລະ ປ່າໄມ້;
2. **ຢູ່ຂັ້ນແຂວງ, ນະຄອນຫຼວງ** ແມ່ນຢູ່ພາຍໃຕ້ການຊີ້ນຳ - ນຳພາຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງເລຂາພັກ ຫຼື ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ຜູ້ຊີ້ນຳວຽກງານກໍ່ສ້າງຮາກຖານການເມືອງຂອງແຂວງ, ນະຄອນຫຼວງ ຊຶ່ງມີພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບຊ່ວຍທາງດ້ານວິຊາການ ໂດຍມີການສົມທົບກັບຫ້ອງການກໍ່ສ້າງຮາກຖານການເມືອງຂອງແຂວງ, ນະຄອນຫຼວງ;
3. **ຢູ່ຂັ້ນເມືອງ** ແມ່ນຢູ່ພາຍໃຕ້ການຊີ້ນຳ-ນຳພາຂອງເຈົ້າເມືອງ ຫຼືຮອງເລຂາພັກ, ຮອງເຈົ້າເມືອງ ຊຶ່ງມີຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ເປັນຜູ້ຊ່ວຍວຽກທາງດ້ານວິຊາການ ໂດຍມີການສົມທົບກັບໜ່ວຍງານກໍ່ສ້າງຮາກຖານການເມືອງ;
4. **ຢູ່ຂັ້ນກຸ່ມບ້ານ** ແມ່ນຢູ່ພາຍໃຕ້ການຊີ້ນຳ - ນຳພາຂອງເລຂາຄະນະພັກ ຫຼື ຮອງເລຂາຄະນະພັກຮາກຖານກຸ່ມບ້ານ;
5. **ຢູ່ຂັ້ນບ້ານ** ແມ່ນຂຶ້ນກັບການຊີ້ນຳ - ນຳພາຂອງເລຂາໜ່ວຍພັກບ້ານ ຫຼື ນາຍບ້ານ, ໃນນີ້ໃຫ້ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ເປັນຜູ້ຮັບຜິດຊອບຊ່ວຍເລຂາຄະນະພັກ ແລະ ອົງການປົກຄອງບ້ານ ໃນການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້.

## ມາດຕາ 11. ລະບອບການລາຍງານ

ລະບອບການລາຍງານວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຕິດຕາມ, ສະຫຼຸບສັງລວມ ແລະ ລາຍງານວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ໃຫ້ລັດຖະບານຊາບເປັນປົກກະຕິ ເພື່ອຂໍທິດຊີ້ນຳຕໍ່ວຽກງານດັ່ງກ່າວ;
2. ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຕິດຕາມ, ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ໃນຂອບເຂດທົ່ວປະເທດເປັນແຕ່ລະໄລຍະ ເພື່ອລາຍງານໃຫ້ລັດຖະມົນຕີວ່າການກະຊວງກະສິກຳ ແລະ

ປ່າໄມ້;

3. ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ເປັນເຈົ້າການສະຫຼຸບສັງລວມ ສະພາບການຈັດຕັ້ງປະຕິບັດວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງ ກະສິກຳ ແລະ ປ່າໄມ້ໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ ເພື່ອລາຍງານໃຫ້ອົງ ການປົກຄອງແຂວງ, ນະຄອນຫຼວງ ແລະ ກະຊວງກະສິກຳ ແລະ ປ່າໄມ້ (ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້) ຢ່າງເປັນປົກກະຕິ;
4. ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ເປັນເຈົ້າການຕິດຕາມ ແລະສະຫຼຸບສັງລວມ ສະພາບການຈັດຕັ້ງປະຕິບັດວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງ ກະສິກຳ ແລະ ປ່າໄມ້ໃນຂອບເຂດເມືອງຂອງຕົນ ເພື່ອລາຍງານໃຫ້ອົງການປົກຄອງ ເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງທີ່ຕົນຂຶ້ນກັບ ຢ່າງເປັນປົກກະຕິ;
5. ອົງການປົກຄອງບ້ານ ເປັນເຈົ້າການຕິດຕາມ ແລະ ສະຫຼຸບສັງລວມ ສະພາບການຈັດຕັ້ງ ປະຕິບັດວຽກງານການສ້າງຄອບຄົວຕົວແບບພາຍໃນບ້ານຂອງຕົນ ເພື່ອລາຍງານໃຫ້ຄະ ນະພັກຮາກຖານກຸ່ມບ້ານ, ອົງການປົກຄອງເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງຢ່າງເປັນປົກກະຕິ;
6. ຫົວໜ້າໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ເປັນເຈົ້າການປະສານສົມທົບກັບຫົວໜ້າ ຄອບຄົວພາຍໃນບ້ານຂອງຕົນ ຕິດຕາມ, ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດ ວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ເພື່ອ ລາຍງານໃຫ້ຄະນະພັກອຳນາດການປົກຄອງບ້ານຢ່າງເປັນປົກກະຕິ.

## ໝວດທີ IV
## ນະໂຍບາຍຕໍ່ຄອບຄົວ ແລະ ບ້ານທີ່ມີຜົນງານ ແລະ ການລຶບຊື່ຄອບຄົວ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

### ມາດຕາ 12. ນະໂຍບາຍຕໍ່ຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

ບັນດາຄອບຄົວ ແລະ ບ້ານທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນວຽກງານການ ສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້ ແມ່ນຈະໄດ້ຮັບການຍ້ອງຍໍຈາກ ອົງການປົກຄອງເມືອງ, ແຂວງ, ນະຄອນຫຼວງ ຫຼື ກະຊວງກະສິກຳ ແລະ ປ່າໄມ້ ຢ່າງເໝາະສົມ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດ, ການຈັດຕັ້ງມະຫາຊົນ, ການຈັດຕັ້ງສັງຄົມ, ວິສາຫະ ກິດທັງພາກລັດ ແລະ ເອກະຊົນຕະຫຼອດຮອດພະນັກງານ, ເຈົ້າໜ້າທີ່ກະສິກຳ ແລະ ປ່າໄມ້ ທີ່ມີ ຜົນງານດີເດັ່ນໃນການຊຸກຍູ້ສົ່ງເສີມ, ນຳພາຈັດຕັ້ງປະຕິບັດຕົວຈິງ, ປະກອບສ່ວນທຶນຮອນ ຫຼື ເຫື່ອ ແຮງຂອງຕົນເຂົ້າໃນວຽກງານການສ້າງຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າ ໄມ້ຈະໄດ້ຮັບໃບຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 13. ການລຶບຊື່ຄອບຄົວຕົວແບບ ແລະ ບ້ານແບບຢ່າງກະສິກຳ ແລະ ປ່າໄມ້

ບັນດາຄອບຄົວທີ່ໄດ້ຮັບໃບຢັ້ງຢືນເປັນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ແລ້ວ ແຕ່ໄດ້ມີການລະເມີດມາດຖານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ຫຼື ມີການກະທຳອື່ນ ຈົນເຮັດໃຫ້ມາດຖານທີ່ເຄີຍໄດ້ມານັ້ນຂາດຫາຍໄປເປັນເວລາ 2 ປີຕິດຕໍ່ກັນ ຈະຖືກອົງການປົກຄອງເມືອງ ຖອນໃບຢັ້ງຢືນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ຄືນ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ໂດຍເປັນເອກະພາບກັບຄະນະພັກອຳນາດການປົກຄອງບ້ານ ແລະ ໜ່ວຍງານກໍ່ສ້າງຮາກຖານການເມືອງ.

ບັນດາບ້ານທີ່ໄດ້ຮັບໃບຢັ້ງຢືນເປັນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ແລ້ວ ແຕ່ໄດ້ມີການລະເມີດມາດຖານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຫຼື ມີຈຳນວນຄອບຄົວຕົວແບບກະສິກຳ ແລະ ປ່າໄມ້ຫຼຸດຈາກ 60% (ຫົກສິບສ່ວນຮ້ອຍ) ເປັນເວລາ 2 ປີຕິດຕໍ່ກັນຈະຖືກອົງການປົກຄອງແຂວງ, ນະຄອນຫຼວງ ຖອນໃບຢັ້ງຢືນບ້ານແບບຢ່າງກະສິກຳ ແລະ ປ່າໄມ້ຄືນ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ໂດຍເປັນເອກະພາບກັບຫ້ອງການກໍ່ສ້າງຮາກຖານການເມືອງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 14. ການຈັດຕັ້ງປະຕິບັດ

ຫ້ອງການ, ກົມ, ກອງ, ສະຖາບັນອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ, ອົງການປົກຄອງທ້ອງຖິ່ນ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

### ມາດຕາ 15. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ສີຕາເຮັ້ງ ຣາຊະພົນ